# ກົດລະບຽບວ່າດ້ວຍການຄຸ້ມຄອງ ທຶນກະສິກຳ ແລະ ປ່າໄມ້ບ້ານ ສະບັບຫຍໍ້ ພາຍໃຕ້ໂຄງການ ຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານ ຫຼຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM)

1. ຈຸດປະສົງຂອງທຶນກະສິກຳ ແລະ ປ່າໄມ້ບ້ານແມ່ນ:

- ສະໜອງສິ່ງຈູງໃຈ ສຳລັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ບ້ານ ແລະ ສົ່ງເສີມການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ ເພື່ອຮັບປະກັນຜົນປະໂຫຍດທີ່ດີ ແລະ ຍືນຍົງແກ່ຊາວບ້ານ.
- ເພື່ອໃຫ້ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ແລະ ສະມາຊິກບ້ານສາມາດຄຸ້ມຄອງ ແລະ ນຳໃຊ້ແຕ່ລະບ້ວງທຶນທີ່ຈະເຂົ້າໄປຫາບ້ານຢ່າງຖືກຕ້ອງ ແລະ ສອດຄ່ອງໄປຕາມຄູ່ມືການເງິນ ແລະ ການຈັດຊື້ຈັດຈ້າງຂອງຜູ້ໃຫ້ທຶນ.

2. ຫຼັກການ: ບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ, ມີຄວາມໂປ່ງໃສ ແລະ ມີການຕັດສິນໃຈແບບປະຊາທິປະໄຕ.

3. ທຶນກະສິກຳ ແລະ ປ່າໄມ້ບ້ານປະກອບດ້ວຍ 3 ບ້ວງທຶນຄື:

- "ບ້ວງທຶນ ສຳລັບ ການເຮັດວຽກ" ເພື່ອຄຸ້ມຄອງປ່າໄມ້ບ້ານປະຈຳປີ. ເງິນທີ່ບ້ານຈະໄດ້ຮັບຕົວຈິງແມ່ນຂຶ້ນກັບການວາງແຜນກິດຈະກຳຕາມເນື້ອທີປ່າໄມ້ຂອງບ້ານ.
- "ບ້ວງທຶນ ສຳລັບ ການລົງທຶນ" ເພື່ອສົ່ງເສີມການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້. ເງິນທີ່ຈະໄດ້ຮັບຕົວຈິງແມ່ນຂຶ້ນກັບການວາງແຜນກິດຈະກຳຂອງແຕ່ລະຄອບຄົວເປົ້າໝາຍທີ່ນອນໃນເງື່ອນໄຂຂອງໂຄງການ.
- "ບ້ວງທຶນ ສຳລັບ ການຈ່າຍຕາມຜົນງານ" ແມ່ນຈະໂອນເຂົ້າບັນຊີ ທຶນກະສິກຳ ແລະ ປ່າໄມ້ບ້ານ ພາຍຫຼັງບ້ານໄດ້ຈັດຕັ້ງປະຕິບັດແຜນການຄຸ້ມຄອງປ່າໄມ້ບ້ານປະຈຳປີ 2 ປີ ຊ້ອນ ແລະ ໄດ້ສຳເລັດການປະເມີນຄວາມປົກຫຸ້ມຂອງປ່າໄມ້ຕາມມາດຖານເງື່ອນໄຂທີ່ກຳນົດດັ່ງລຸ່ມນີ້:

✓ ບ້ານຈະໄດ້ຮັບເງິນຈ່າຍຕາມຜົນງານ 100% (ເປີເຊັນ) ຖ້າສາມາດຮັກສາເນື້ອທີ່ປົກຫຸ້ມປ່າໄມ້ທີ່ກຳນົດໄວ້ຢູ່ໃນ ສັນຍາ ໄດ້ 95% ຂຶ້ນໄປ (ໝາຍເຫດ: ເງິນທີ່ຈະໄດ້ຮັບຕົວຈິງແມ່ນຂຶ້ນກັບເນື້ອທີ່ປົກຫຸ້ມປ່າໄມ້ຂອງບ້ານ),

✓ ບ້ານຈະໄດ້ຮັບເງິນຈ່າຍຕາມຜົນງານ 50% (ເປີເຊັນ) ຖ້າສາມາດຮັກສາເນື້ອທີ່ປົກຫຸ້ມປ່າໄມ້ທີ່ກຳນົດໄວ້ຢູ່ ໃນສັນຍາ ໄດ້ 75 - 94,9%, (ໝາຍເຫດ: ເງິນທີ່ຈະໄດ້ຮັບຕົວຈິງແມ່ນຂຶ້ນກັບເນື້ອທີ່ປ່າໄມ້ຂອງບ້ານ),

✓ ບ້ານຈະບໍ່ໄດ້ຮັບເງິນຈ່າຍຕາມຜົນງານ ຖ້າຮັກສາເນື້ອທີ່ປົກຫຸ້ມປ່າໄມ້ທີ່ກຳນົດໄວ້ຢູ່ໃນສັນຍາ ໄດ້ຕ່ຳກວ່າ 75%.

4. ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ປະກອບດ້ວຍສະມາຊິກ 3 ທ່ານຄື: (1) ຫົວໜ້າ, (2) ນາຍຄັງເງິນສົດ ແລະ (3) ນາຍບັນຊີ (ໜຶ່ງໃນນັ້ນຕ້ອງມີແມ່ຍິງ 1 ທ່ານ) ໂດຍໄດ້ຮັບຮອງຢູ່ກອງປະຊຸມໃຫຍ່ກ່ຽວກັບການສ້າງຕັ້ງຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ. ຄະນະດັ່ງກ່າວມີໜ້າທີ່ຊີ້ນຳລວມກ່ຽວກັບ ການຄຸ້ມຄອງ, ການເບີກຈ່າຍ ແລະ ການລາຍງານ ທຶນທັງໝົດທີ່ໄດ້ຮັບ ແລະ ນຳໃຊ້ຈັດຕັ້ງແຜນກິດຈະກຳຂອງບ້ານໃຫ້ຜູ້ໃຫ້ທຶນ. ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ຕ້ອງເຮັດວຽກດ້ວຍຄວາມຍຸດຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

5. ທຶນກະສິກຳ ແລະ ປ່າໄມ້ບ້ານ ຖືກນຳໃຊ້ ສຳລັບ ແຜນກິດຈະກຳຄຸ້ມຄອງປ່າໄມ້ບ້ານ, ປ່າສະຫງວນ ແລະ ການຜະລິດກະສິກຳແບບຍືນຍົງ ຕາມເປົ້າໝາຍຂອງໂຄງການ.

6. ທຶນກະສິກຳ ແລະ ປ່າໄມ້ບ້ານແມ່ນເປັນຂອງຊາວບ້ານ ເພາະສະນັ້ນ ທຸກແຜນກິດຈະກຳຂອງບ້ານແມ່ນຈະຕ້ອງໄດ້ຖືກຮັບຮອງຈາກຊາວບ້ານ, ໜ່ວຍງານ ແລະ ຄະນະຄຸ້ມຄອງໂຄງການຂັ້ນເມືອງ ຢ່າງເປັນເອກະພາບ ແລະ ຖືກຕ້ອງ.

7. ກອງປະຊຸມໃຫຍ່ກ່ຽວກັບທຶນກະສິກຳ ແລະ ປ່າໄມ້ບ້ານ ຄວນໄດ້ຮັບການຈັດຂຶ້ນຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ເພື່ອລາຍງານຜົນສຳເລັດໃນປີຜ່ານມາ ກ່ອນການຂຶ້ນແຜນກິດຈະກຳ ແລະ ຂໍເງິນປີຕໍ່ໄປ.

ໝາຍເຫດ: ລາຍລະອຽດແມ່ນສາມາດອ່ານຢູ່ໃນ ກົດລະບຽບວ່າດ້ວຍການຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານສະບັບເຕັມ

ຈັດຕັ້ງປະຕິບັດໂດຍ:

Deutsche Gesellschaft für Internationale Zusammenarbeit (GIZ) GmbH